EMPLOYMENT DEVELOPMENT DEPARTMENT
P.O. BOX 2530
RANCHO CORDOVA, CA 95741-2530

EDD Employment Development Department
State of California

# ເອກະສານທີ່ຮັບໄດ້ສຳລັບການກວດສອບການລະບຸຕົວ

**(ສົ່ງສະບັບສຳເນົາ ນອກຈາກວ່າໄດ້ບອກເປັນຢ່າງອື່ນ)**

ທ່ານຕ້ອງໃຫ້ເອກະສານ**ສະບັບໜຶ່ງ** ຈາກຖັນ **"ການລະບຸຕົວດ້ວຍຮູບ" ແລະເອກະສານສະບັບໜຶ່ງ ຫຼືຫຼາຍສະບັບ** ຈາກຖັນ **"ເອກະສານຫຼັກຖານລະບຸຕົວອື່ນໆ"** ຢູ່ລຸ່ມນີ້. ທຸກເອກະສານທີ່ສົ່ງໃຫ້ຈະຖືກກັອບປີ້ໄປໃສ່ເຈ້ຍຂະໜາດ 8 ½ x 11 ນີ້ວ ແລະຕ້ອງເອົາເລກປະກັນສັງຄົມຂອງທ່ານໃສ່ໄວ້ໃນແຕ່ລະໜ້ານຳ.

## ການລະບຸຕົວດ້ວຍຮູບ

ກະລຸນາໃຫ້**ໜຶ່ງ**ໃນເອກະສານຕໍ່ໄປນີ້ເປັນສະບັບສຳເນົາທີ່ແຈ້ງ ແລະອ່ານໄດ້.

- ໃບອະນຸຍາດຂັບຂີ່ ຫຼືບັດປະຈຳຕົວ (ID) ທີ່ອົງການຂອງລັດ/ທ້ອງຖິ່ນ/ລັດຖະບານກາງອອກໃຫ້ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ເອກະສານທາງການທີ່ອົງການຂອງລັດ/ທ້ອງຖິ່ນ/ລັດຖະບານກາງອອກໃຫ້ທ່ານ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ໜັງສືເດີນທາງຂອງສະຫະລັດ ຫຼືບັດເດີນທາງຂອງສະຫະລັດ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ໜັງສືເດີນທາງຂອງຕ່າງປະເທດທີ່ບໍ່ທັນໝົດອາຍຸ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ບັດທະຫານຂອງສະຫະລັດ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ບັດປະຈຳຕົວ (ID) ຂອງຜູ້ຂຶ້ນກັບທະຫານ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ໃບຈົດທະບຽນຕ່າງດ້າວ ແລະບັດອະນຸຍາດໃຫ້ຢູ່ຖາວອນ *(ແບບຟອມ I-551)* ອອກໃຫ້ໂດຍໜ່ວຍງານພົນລະເມືອງ ແລະການເຂົ້າເມືອງຂອງສະຫະລັດ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.
- ໃບຢັ້ງຢືນການປ່ຽນສັນຊາດ *(ແບບຟອມ N-550)*.
- ເອກະສານການອະນຸຍາດໃຫ້ເຮັດວຽກ *(ແບບຟອມ I-766)* ອອກໃຫ້ໂດຍໜ່ວຍງານພົນລະເມືອງ ແລະການເຂົ້າເມືອງຂອງສະຫະລັດ ທີ່ມີຊື່ຂອງທ່ານ, ວັນເດືອນປີເກີດຂອງທ່ານ, ແລະຮູບຖ່າຍຂອງທ່ານ.

## ເອກະສານຫຼັກຖານລະບຸຕົວອື່ນໆ

ກະລຸນາໃຫ້**ໜຶ່ງ ຫຼືຫຼາຍ**ເອກະສານຕໍ່ໄປນີ້ເປັນສະບັບສຳເນົາ ຫຼືສະບັບຕົ້ນທີ່ແຈ້ງ ແລະອ່ານໄດ້ (ຕາມທີ່ກຳນົດ).*

**ຂໍ້ມູນການຈ້າງງານ**

- ສຳເນົາຂອງໃບ W-2 ຢ່າງໜ້ອຍໃບໜຶ່ງທີ່ອອກໃຫ້ກັບທ່ານສຳລັບປີທີ່ຜ່ານມາ;

**ຫຼື**

- ຢ່າງໜ້ອຍສຳເນົາສົ້ນໃບເຊັກຈ່າຍເງິນ ຫຼືໃບຢັ້ງຢືນການຈ່າຍເງິນທີ່ນາຍຈ້າງຂອງທ່ານອອກໃຫ້ທ່ານ ພາຍໃນສິບສອງເດືອນກ່ອນວັນທີໄດ້ຍື່ນການຮ້ອງຮຽນຂອງທ່ານເປັນເທື່ອທຳອິດ. ສົ້ນໃບເຊັກ ຫຼືໃບຢັ້ງຢືນການຈ່າຍເງິນແມ່ນຕ້ອງມີຂໍ້ມູນຕໍ່ໄປນີ້ທັງໝົດພິມໄວ້ຢູ່ກ່ອນຄື:
  - o ຊື່ ຫຼືຕົວອັກສອນຫຍໍ້ ແລະນາມະກຸນຂອງທ່ານ; ແລະ
  - o ເລກປະກັນສັງຄົມຂອງທ່ານ, ຢ່າງໜ້ອຍສີ່ຕົວເລກສຸດທ້າຍຂອງເລກປະກັນສັງຄົມຂອງທ່ານ, ຫຼືເລກປະຈຳຕົວລູກຈ້າງຂອງທ່ານ, ແລະ
  - o ຊື່ຂອງນາຍຈ້າງຂອງທ່ານ; ແລະ
  - o ວັນທີອອກສົ້ນໃບເຊັກ ຫຼືໃບຢັ້ງຢັ້ງຢືນການຈ່າຍເງິນ ຫຼືໄລຍະການຈ່າຍເງິນທີ່ໄດ້ອອກສົ້ນໃບເຊັກ ຫຼືໃບຢັ້ງຢືນການຈ່າຍເງິນໃຫ້.

**ຫຼື**

**ການກວດສອບທີ່ຢູ່**

- ໃບບິນການນຳໃຊ້ສິ່ງອຳນວຍຄວາມສະດວກ**ສະບັບຕົ້ນ**ບໍ່ໄດ້ປ່ຽນແປງ (ຕົວຢ່າງ, ໄຟຟ້າ, ແກັສ, ຂີ້ເຫຍື້ອ, ນ້ຳ, ຫຼືນ້ຳເສຍ), ບິນເຄເບິລ TV, ບິນໂທລະສັບ, ຈົດໝາຍໂຕ້ຕອບຈາກທະນາຄານ, ສັນຍາເຊົ່າ/ໃຫ້ເຊົ່າທີ່ຢູ່ອາໄສປະຈຸບັນ ຫຼືໃບຢັ້ງຢືນການຈຳນອງທີ່ສະແດງໃຫ້ຊື່ ແລະທີ່ຢູ່ບ່ອນຢູ່ປະຈຸບັນຂອງທ່ານ;

**ຫຼື**

- ຖ້າທ່ານບໍ່ມີທີ່ຢູ່ບ່ອນຢູ່, ແຕ່ທ່ານມີ ຕູ້ໄປສະນີ ຫຼືກ່ອງຮັບຈົດໝາຍສ່ວນຕົວ, ທ່ານຕ້ອງໃຫ້ການກວດສອບການລົງທະບຽນ ທີ່ສະແດງໃຫ້ເຫັນວ່າ ທ່ານເປັນຜູ້ເຊົ່າ ຫຼືຜູ້ໃຊ້ທີ່ໄດ້ຮັບສິດໃຊ້ຕູ້ນັ້ນ.

**ຫຼື**

**ການກວດສອບໝາຍເລກປະກັນສັງຄົມ**

*ຢ່າສົ່ງບັດປະກັນສັງຄົມສະບັບຕົ້ນ ຫຼືສຳເນົາຂອງມັນໄປ. ມັນຈະບໍ່ບັນລຸເງື່ອນໄຂຄວາມຕ້ອງການນີ້ໄດ້.*

- ສຳເນົາສົມບູນຂອງ ***ໃບຢັ້ງຢືນປະກັນສັງຄົມຂອງທ່ານ***, ເຊິ່ງທ່ານໄດ້ຮັບຈາກອົງການປະກັນສັງຄົມປະຈຳປີ;

**ຫຼື**

**ການກວດສອບວັນເດືອນປີເກີດ**

ໃບຊະຕາລາຍເກີດ**ທາງການ** ທີ່ທາງອົງການຂອງທ້ອງຖິ່ນ, ລັດ, ຫຼືລັດຖະບານກາງອອກໃຫ້, ຫຼືລັດຖະບານຕ່າງປະເທດ ຫຼືອົງການຢັ້ງຢືນທາງການອື່ນໆກ່ຽວກັບການເກີດຂອງທ່ານອອກໃຫ້.

ໃບຢັ້ງຢືນການເກີດທີ່ໝາຍໄວ້ວ່າ "ເປັນຂໍ້ມູນ, ບໍ່ແມ່ນເອກະສານນຳໃຊ້ໄດ້ ເພື່ອເຮັດການລະບຸຕົວ," ບໍ່ແມ່ນການກວດສອບທີ່ຍອມຮັບໄດ້.

** ຖ້າຕ້ອງການເອກະສານເພີ່ມເຕີມ, ທາງກົມພັດທະນາການຈ້າງງານ (EDD) ຈະຕິດຕໍ່ຫາທ່ານ. ບັນທຶກແຈ້ງການນີ້ໄວ້ເປັນຫຼັກຖານອ້າງອີງໃນອະນາຄົດ.*